ທະນາຄານຮ່ວມພັດທະນາ ມະຫາຊົນ

ເລກທີ 119 /ທຄຮ
ນະຄອນຫຼວງວຽງຈັນ, ວັນທີ 30 JUL 2026

ມະຕິ
ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ
ສະໄໝວິສາມັນ ຄັ້ງທີ IV, ປະຈຳປີ 2026

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດຫຼັກຊັບ ແລະ ບໍລິສັດ ຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍສະພາບໍລິຫານ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ສະບັບປັບປຸງ, ສະບັບເລກທີ 14/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມ ກົດລະບຽບຂອງທະນາຄານຮ່ວມພັດທະນາ ມະຫາຊົນ ສະບັບເລກທີ 064/ທຄຮ, ລົງວັນທີ 5 ມີນາ 2026.

ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ) ສະໄໝວິສາມັນ ຄັ້ງທີ IV ປະຈຳປີ 2026 (ຕໍ່ໄປນີ້ຮຽກວ່າ: ກອງປະຊຸມ), ໄດ້ເປີດຂຶ້ນ ໃນເວລາ: 09:30 ໂມງ, ຂອງວັນທີ 29 ກໍລະກົດ 2026, ທີ່ສຳນັກງານໃຫຍ່ ທະນາຄານຮ່ວມພັດທະນາ ມະຫາຊົນ, ໂດຍການເປັນປະທານຂອງ ທ່ານ ສູນທອນ ຈັນທະວົງ, ປະທານສະພາບໍລິຫານ ໂດຍມີສະມາຊິກສະພາບໍລິຫານ ຈຳນວນ 7 ທ່ານ ແລະ ພະແນກການທີ່ກ່ຽວຂ້ອງເຂົ້າຮ່ວມ. ຜ່ານການຄົ້ນຄວ້າ ແລະ ແລກປ່ຽນຄຳເຫັນຂອງບັນດາສະມາຊິກສະພາບໍລິຫານ ຢ່າງເລິກເຊິ່ງ, ບັນດາສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ ໄດ້ຕົກລົງເປັນເອກະພາບຕໍ່ແຕ່ລະວາລະຂອງກອງປະຊຸມ ດັ່ງນີ້:

ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ ມີມະຕິຕົກລົງ ດັ່ງນີ້:

ມາດຕາ 1 ຮັບຮອງເອົາ ການແຕ່ງຕັ້ງຄະນະກຳມະການຕ່າງໆຂອງສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ, ດັ່ງນີ້:

1) ຄະນະກຳມະການ ຄຸ້ມຄອງບໍລິຫານ, ປະກອບມີ:
   - ທ່ານ ຄຳສິງ ສອນສິນນະວົງ ປະທານຄະນະກຳມະການ;
   - ທ່ານ ສູນທອນ ຈັນທະວົງ ຄະນະກຳມະການ;
   - ທ່ານ ນາງ ຄອນສະຫວັນ ວິຊາເທບ ຄະນະກຳມະການ.

2) ຄະນະກຳມະການ ຄຸ້ມຄອງຄວາມສ່ຽງ, ປະກອບມີ:
   - ທ່ານ ບຸນຊຸ່ມ ສີສະຫວັດ ປະທານຄະນະກຳມະການ;
   - ທ່ານ ຈັນທະພອນ ຈັນທະວົງ ຄະນະກຳມະການ;
   - ທ່ານ ນາງ ຄອນສະຫວັນ ວິຊາເທບ ຄະນະກຳມະການ.

3) ຄະນະກຳມະການ ກວດສອບ, ປະກອບມີ:
   - ທ່ານ ສຸກສະຫວັນ ມະນີວັນ ປະທານຄະນະກຳມະການ;

ເລກທີ 82 ຖະໜົນ ລ້ານຊ້າງ ບ້ານຫັດສະດີ ເມືອງຈັນທະບຸລີ ນະຄອນຫຼວງວຽງຈັນ, 01000, ສປປ ລາວ ໂທ.(+856-21) 213531-6
ສາຍດ່ວນ: 1499, WEBSITE:WWW.JDBBANK.COM.LA; EMAIL:INFO@JDBBANK.COM.LA

- ທ່ານ ຄຳສິງ ສອນສິນມະວິງ ຄະນະກຳມະການ;
- ທ່ານ ບຸນຊຸ່ມ ສີສະຫວັດ ຄະນະກຳມະການ.

4) ຄະນະກຳມະການ ກຳນົດຄ່າຕອບແທນ, ປະກອບມີ:
   - ທ່ານ ປອ. ຈອມຄຳ ບຸບຜາລີວັນ ປະທານຄະນະກຳມະການ;
   - ທ່ານ ນາງ ຄອນສະຫວັນ ວິຊາເທບ ຄະນະກຳມະການ;
   - ທ່ານ ຄຳສິງ ສອນສິນມະວິງ ຄະນະກຳມະການ.

5) ຄະນະກຳມະການ ຄັດເລືອກ, ປະກອບມີ:
   - ທ່ານ ຈັນທະພອນ ຈັນທະວິງ ປະທານຄະນະກຳມະການ;
   - ທ່ານ ຄຳສິງ ສອນສິນມະວິງ ຄະນະກຳມະການ;
   - ທ່ານ ນາງ ຄອນສະຫວັນ ວິຊາເທບ ຄະນະກຳມະການ.

ມາດຕາ 2 ການຈັດຕັ້ງປະຕິບັດ

ມອບໃຫ້ພາກສ່ວນກ່ຽວຂ້ອງ ດຳເນີນການໃຫ້ສອດຄ່ອງຕາມລະບຽບການ.

ປະທານກອງປະຊຸມ